# (ຮ່າງ)

# ແຜນພັດທະນາສາທາລະນະສຸກ 5 ປີ ຄັ້ງທີ X (2026-2030)

ສະເໜີໂດຍ: ກົມແຜນການ ແລະ ການເງິນ

# ການຈັດຕັ້ງປະຕິບັດແຜນພັດທະນາສາທາລະນະສຸກ 5 ປີ ຄັ້ງ IX (2021-2025)

## ນະໂຍບາຍ-ຍຸດທະສາດທີ່ສຳຄັນ

1) ຍຸດທະສາດປະຕິຮູບສາທາລະນະສຸກ ໄລຍະ III (2021-2025);
2) ນະໂຍບາຍ 5 ດີ 1 ພໍໃຈ + ການທົດລອງຫັນໂຮງໝໍກຸ້ມຕົນເອງ;
3) ແຜນປະຕິບັດງານ ຍຸດທະສາດ ສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ 2016 -2025 (RMNCAH);
4) ແຜນການປະຕິບັດງານແຫ່ງຊາດ ດ້ານໂພຊະນາການ (2021-2025);
5) ຍຸດທະສາດ ຣສຂ + ສ້າງກົດໝາຍ ຣສຂ ສຳເລັດ;
6) ຍຸດທະສາດການຄວບຄຸມ ແລະ ກຳຈັດພະຍາດໄຂ້ມາລາເລຍ;
7) ຍຸດທະສາດຄວບຄຸມວັນນະໂລກແຫ່ງຊາດ 5 ປີ 2021 ຫາ 2025;
8) ວຽກງານຕ້ານເອດ;
9) ວຽກງານ ອຢ: ສ້າງ ແລະ ປັບປຸງນິຕິກຳລຸ່ມກົດໝາຍ, ພັດທະນາ & ຜະລິດ ຢາພື້ນເມືອງ; ສົ່ງເສີມການຜະລິດພາຍໃນ; ຮັບປະກັນວຽກພາລາທິການ; ພັດທະນາ ວຽກງານວິໄຈ ອາຫານ, ຢາ;
10) ຍຸດທະສາດພັດທະນາຊັບພະຍາກອນມະນຸດສາທາລະນະສຸກ ຮອດປີ 20230;
11) ຍຸດທະສາດກອງທຶນປະກັນສຸຂະພາບແຫ່ງຊາດ 2021-2025 + ປັບປຸງກົດໝາຍວ່າດ້ວຍປະກັນສຸຂະພາບແຫ່ງຊາດ;
12) ຍຸດທະສາດການນຳໃຊ້ ດິຈິຕອນເຂົ້າໃນວຽກງານສາທາລະນະສຸກ ແຕ່ປີ 2023 ຫາ 2027.
13) ກົດໝາຍປັບປຸງ: ກົດໝາຍປິ່ນປົວ, ກົດໝາຍຄວບຄຸມພະຍາດຕິດຕໍ່, ກົດໝາຍປະກັນສຸຂະພາບ; ກົດໝາຍສ້າງໃໝ່: ກົດໝາຍ ສາທາລະນະສຸກ, ຣສຂມກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ.

## ຜົນສຳເລັດ

| | ຕົວຊີ້ບອກທີ່ສາມາດບັນລຸ | ຕົວຊີ້ບອກທີ່ບໍ່ສາມາດບັນລຸ |
|---|---|---|
| 2025 | ? | ? |
| 2024 | IMR, U5MR, MMR, Water Latrine, HIC, MHV, | Underweight, Stunting, SBA, Penta3 |
| 2023 | IMR, U5MR, MMR, SBA, Penta3 Water Latrine, MHV | Underweight, Stunting, HIC |
| 2022 | IMR, U5MR, MMR, Water Latrine, HIC, MHV | Underweight, Stunting, SBA, Penta3 |
| 2021 | IMR, U5MR, MMR, Latrine, HIC, MHV, Underweight, Stunting | SBA, Penta3, Water |

# ຂະບວນການການສ້າງແຜນພັດທະນາສາທາລະນະສຸກ 5 ປີ ຄັ້ງ X (2026-2030)

**14 ມີນາ**

**ຜົນໄດ້ຮັບ**

1) ເອກະພາບທິດທາງລວມ

2) ກຳນົດລາຍການ ຕົວຊີ້ບອກ

3) ກຳນົດວຽກບູລິມະສິດລວມ ແລະ ຕາມສາຍແຜນງານ

**08 ພຶດສະພາ**

**ຜົນໄດ້ຮັບ**

1)ເອກະພາບທິດທາງລວມ

2)ກຳນົດລາຍການ ຕົວຊີ້ບອກ

3)ກຳນົດວຽກບູລິມະສິດລວມ ແລະ ຕາມສາຍແຜນງານ

4)ແຂວງສະເໜີສູນກາງປັບປຸງແຜນງານຍ່ອຍ, ໂຄງການ

**31 ກໍລະກົດ**

**ຜົນໄດ້ຮັບ**

ທິດຊີ້ນຳ ທ່ານ ລມຕ:

ແຕ່ລະກົມກອງປະກອບຄຳເຫັນ ແລະ ປັບປຸງເນື້ອໃນຕໍ່ຮ່າງແຜນພັດທະນາສາທາລະນະສຸກ 5 ປີ ຄັ້ງທີ X (2026-2030) ໂດຍສະເພາະແມ່ນວຽກບູລິມະສິດ

**11 ກັນຍາ**

**ຜົນໄດ້ຮັບ**

1) ເອກະພາບການກຳນົດ ຕຊບ ສະພາ ແຫ່ງຊາດ ແລະ ຕຊບ ຂອງແຜນງານ;
2) ເອກະພາບຮ່າງທຳອິດ(Narrative) ແຜນພັດທະນາສາທາລະນະສຸກ 5 ປີ ຄັ້ງ X (2026-2030)
3) ກຳນົດ ແຜນງານຍ່ອຍ, ໂຄງການ ສຳລັບ 5 ປີຕໍ່ໜ້າ

# ໂຄງຮ່າງແຜນພັດທະນາສາທາລະນະສຸກ 5 ປີ ຄັ້ງ X (2026-2030)

**ແຜນ 5 ປີ ຄັ້ງທີ X (2026-2030):**

- ✓ **7 ແຜນງານ**
- ✓ **53 ແຜນງານຍ່ອຍ**
- ✓ **133 ໂຄງການ**

1. ອະນາໄມ ແລະ ສົ່ງເສີມສຸຂະພາບ ມີ 6 ຜງ ຍ່ອຍ, 24 ໂຄງການ
2. ກັນພະຍາດ ແລະ ຄວບຄຸມພະຍາດຕິດຕໍ່ ມີ 8 ຜງ ຍ່ອຍ, 13 ໂຄງການ
3. ປິ່ນປົວ ແລະ ຟື້ນຟູໜ້າທີ່ການ ມີ 5 ຜງ ຍ່ອຍ, 15 ໂຄງການ
4. ປົກປ້ອງຜູ້ບໍລິໂພກອາຫານ, ຢາ ແລະ ຜະລິດຕະພັນການແພດ ມີ 9 ຜງ ຍ່ອຍ, 20 ໂຄງການ
5. ຄຸ້ມຄອງ, ພັດທະນາພະນັກງານ ແລະ ຄົ້ນຄວ້າວິທະຍາສາດສາທາລະນະສຸກ ມີ 4 ຜງ ຍ່ອຍ, 16 ໂຄງການ
6. ແຜນການ ແລະ ການເງິນສາທາລະນະສຸກ ມີ 7 ຜງ ຍ່ອຍ, 18 ໂຄງການ
7. ບໍລິຫານຄຸ້ມຄອງ ແລະ ກວດກາ ມີ 14 ຜງ ຍ່ອຍ, 27 ໂຄງການ

# ຄາດໝາຍ ແລະ ຕົວຊີ້ບອກ ຮອດປີ 2030

1) ອັດຕາເດັກນ້ອຍລຸ່ມ 05 ປີ ທີ່ມີລວງສູງຕໍ່າກວ່າມາດຕະຖານ <23% ຂອງປະຊາກອນເປົ້າໝາຍ;
2) ອັດຕາເດັກນ້ອຍລຸ່ມ 05 ປີ ທີ່ຂາດສານອາຫານກະທັນຫັນ (ຈ່ອຍຜອມ) <5 % ຂອງປະຊາກອນເປົ້າໝາຍ;
3) ອັດຕາເດັກນ້ອຍລຸ່ມ 05 ປີທີ່ມີນໍ້າໜັກຕໍ່າກວ່າມາດຕະຖານ <10% ຂອງປະຊາກອນເປົ້າໝາຍ;
4) ອັດຕາການຕາຍຂອງເດັກເກີດໃໝ່ <10/1,000 ຄົນເດັກນ້ອຍເກີດມີຊີວິດ;
5) ອັດຕາການຕາຍຂອງເດັກນ້ອຍລຸ່ມ 05 ປີ <25/1,000 ຄົນເດັກນ້ອຍເກີດມີຊີວິດ;
6) ອັດຕາສ່ວນການຕາຍຂອງແມ່ <70/100,000 ຄົນເດັກນ້ອຍເກີດມີຊີວິດ;
7) ອັດຕາເກີດລູກມີແພດຊ່ວຍ >90% ຂອງປະຊາກອນເປົ້າໝາຍ;
8) ອັດຕາໃຫ້ວັກຊີນກັນພະຍາດ PENTA 3 >95% ຂອງປະຊາກອນເປົ້າໝາຍ;
9) ອັດຕາການປົກຄຸມການປິ່ນປົວພະຍາດວັນນະໂລກ >95%;
10) ອັດຕາການຕິດເຊື້ອໄຂ້ມາລາເຣຍປະຈໍາປີ (ລວມທຸກຊະນິດເຊື້ອ) = 0 ກໍລະນີ;
11) ຊາຍ-ຍິງທີ່ມີອາຍຸ 15-24 ປີ ມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບການປ້ອງກັນການຕິດເຊື້ອເຮສໄອວີ ທີ່ຖືກຕ້ອງ >80%;
12) ອັດຕາປົກຄຸມປະກັນສຸຂະພາບ >94,5% ຂອງປະຊາກອນທັງໝົດ;
13) ເພີ່ມອັດຕາການບໍລິໂພກເກືອໄອໂອດີນຂອງຄົວເຮືອນ >60% ຂອງປະຊາກອນເປົ້າໝາຍ;
14) ອັດຕາຊົມໃຊ້ນໍ້າສະອາດ >95% ຂອງປະຊາກອນທັງໝົດ;
15) ອັດຕາຊົມໃຊ້ວິດຖ່າຍຄອບຄົວ >90% ຂອງຄອບຄົວທັງໝົດ.

# ວຽກຈຸດສຸມບູລິມະສິດໃນ 5 ປີ ຕໍ່ໜ້າ: ແຜນງານ 1

- ເພີ່ມທະວີຄວາມເອົາໃຈໃສ່**ວຽກງານໂຄສະນາ, ສຸຂະສຶກສາ**ໃຫ້ຄວາມຮູ້ການຮັກສາສຸຂະພາບໃຫ້ປະຊາຊົນລາວບັນດາ ເຜົ່າຢ່າງກວ້າງຂວາງ ແລະ ທົ່ວເຖິງ ເພື່ອຫັນປ່ຽນທັດສະນາ, ວິທີການນຳລົງຊີວິດ ແລະ ເຂົ້າຮ່ວມເປັນເຈົ້າການໃນວຽກງານຮັກສາສຸຂະພາບໃຫ້ນັບມື້ຫຼາຍຂຶ້ນ;
- ຍົກສູງຄວາມເປັນເຈົ້າການໃນ**ການຈັດຕັ້ງປະຕິບັດວຽກງານໂພຊະນາການ** ແນ່ໃສ່ຫຼຸດຜ່ອນອັດຕາການຂາດສານອາຫານໃນເດັກ

- **ສົ່ງເສີມ ໂພຊະນາການ**ໃນແມ່ຍິງ, ເດັກອ່ອນ ແລະ ເດັກນ້ອຍ, ການໃຫ້ຄຳປຶກ & ການບໍລິການ ກ່ຽວກັບການລ້ຽງລູກດ້ວຍນົມແມ່ຢ່າງດຽວແຕ່ເກີດຮອດອາຍຸ 6 ເດືອນ;
- **ສະໜອງຈຸລະສານອາຫານ** ທີ່ຈຳເປັນໃຫ້ແກ່ ແມ່ຍິງ & ເດັກນ້ອຍ ໃນກຸ່ມເປົ້າໝາຍ;
- ພັດທະນາ & **ຈັດຕັ້ງປະຕິບັດແຜນງານແບບປະສົມປະສານຂອງຫຼາຍຂະ ແໜງການ** ເພື່ອແກ້ໄຂບັນຫາດ້ານໂພຊະນາການໃນເດັກຢ່າງຄົບຊຸດ ແລະ ມີປະສິດຕິຜົນດີ

**ປັບປຸງລະບົບສຸຂະອະນາໄມ, ນໍ້າສະອາດ ແລະ ສຸຂາພິບານ ຢ່າງທົ່ວເຖິງ**

- ສ້າງຄວາມເຂັ້ມແຂງໃຫ້ສະຖາທີ່ບໍລິການສາທາລະນະສຸກ ແລະ ຊຸມຊົນ ໃຫ້ມີຄວາມທົນທານ ແລະ ສາມາດປັບຕົວໄດ້ກັບການປ່ຽນແປງຂອງດິນຟ້າ-ອາກາດ ຕາມທິດສີຂຽວ ແລະ ມີຄວາມຍືນຍົງ

# ວຽກຈຸດສຸມບູລິມະສິດໃນ 5 ປີ ຕໍ່ໜ້າ:

ແຜນງານ 2

**ສ້າງຄວາມເຂັ້ມແຂງວຽກງານເຝົ້າລະວັງ**ການລະບາດຂອງພະຍາດ ແລະ ໂຕ້ຕອບທຸກເຫດການສຸກເສີນດ້ານສາທາລະນະສຸກຢ່າງທັນການ;

**- ຍົກລະດັບຄຸນນະພາບຂອງການກວດວິເຄາະ**ພະຍາດ;

**ລົບລ້າງບັນດາພະຍາດ**ທີ່ເປັນບັນຫາດ້ານສາທາລະນະສຸກ ເປັນຕົ້ນແມ່ນ ພະຍາດວັນນະໂລກ, ພະຍາດເອດສ໌ ແລະ ພະຍາດໄຂ້ມາເລເຣຍ ແລະ ພະຍາດອື່ນໆ.

ແຜນງານ 3

**- ປັບປຸງຍົກລະດັບໂຄງລ່າງພື້ນຖານ**ດ້ານສາທາລະນະສຸກທັງຢູ່ສູນກາງ ແລະ ທ້ອງຖິ່ນຮາກຖານ ໃຫ້ໄດ້ມາດຕະຖານ ໄປພ້ອມກັບການປະກອບຢາ, ເຄື່ອງມື, ອຸປະກອນການແພດ ທີ່ທັນສະໄໝ;

- ຫັນປ່ຽນໃໝ່ຈາກການບໍລິຫານຄຸ້ມຄອງໂຮງໝໍລັດ ໄປສູ່ກົນໄກການ**ກຸ້ມຕົນເອງດ້ານການເງິນຂອງບັນດາໂຮງ**ໝໍສູນກາງ, ໂຮງໝໍແຂວງຕາມທິດສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ໃຫ້ເປັນຮູບປະທຳ, ພ້ອມທັງຫັນໂຮງໝໍສູນກາງໃຫ້ມີຄວາມທັນສະໄໝ.

ແຜນງານ 3 (ຕໍ່)

- ຊຸກຍູ້, **ສົ່ງເສີມ ການປະກອບສ່ວນຂອງພາກເອກະຊົນ**ເຂົ້າໃນການສະໜອງບໍລິການດ້ານສາທາລະນະສຸກ;

- ສ້າງລະບົບບໍລິການສຸຂະພາບທີ່ດີ ຖືເອົາຄົນເປັນໃຈກາງ, ມີຈັນຍາບັນ ເອົາໃຈໃສ່ດູແລສຸຂະພາບ ຂອງປະຊາຊົນ ທັງຮ່າງກາຍ ແລະ ຈິດໃຈ ໂດຍອີງຕາມ**ນະໂຍບາຍ 5 ດີ 1 ພໍໃຈ;**

- ຊຸກຍູ້, ສົ່ງເສີມ ການປ້ອງກັນພະຍາດບໍ່ຕິດຕໍ່

# ວຽກຈຸດສຸມບູລິມະສິດໃນ 5 ປີ ຕໍ່ໜ້າ: ແຜນງານ 4

- **ສືບຕໍ່ປັບປຸງກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ** (ກົດໝາຍວ່າດ້ວຍອາຫານ, ຢາ ແລະ ຜະລິດຕະພັນການແພດ);
- **ສ້າງຄວາມເຂັ້ມແຂງລະບົບພະລາທິການ ແລະ ວຽກງານການຈັດຊື້**ໃຫ້ແກ່ບັນດາໂຮງໝໍ ແລະ ແຂວງ ແລະ ນຳໃຊ້ລະບົບທີ່ທັນສະໄໝເຂົ້າໃນການຄຸ້ມຄອງ ແລະ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ;
- ນຳໃຊ້ ຜ່ານລະບົບ Digital /Online ເຂົ້າໃນ**ການຂຶ້ນທະບຽນ, ຈົດແຈ້ງ ແລະ ການອະນຸຍາດນຳເຂົ້າ**ຜະລິດຕະພັນອາຫານ ແລະ ຢາ.

ສ້າງຄວາມເຂັ້ມແຂງວຽກງານການ**ຮັບປະກັນການມີຢາ ແລະ ອຸປະກອນການແພດ**ຂອງບັນດາແຂວງ, ເມືອງ ແລະ ສຸກສາລາ

- ປັບປຸງ ແລະ **ພັດທະນາ ແລະ ນຳໃຊ້ເຄື່ອງທີ່ທັນສະໄໝ (mSupply)** ເຂົ້າໃນວຽກງານພາລາທິການ;
- ປັບປຸງ ການຜະລິດຢາ ແລະ **ຜະລິດຕະພັນການແພດ ພາຍໃນໃຫ້ເຂັ້ມແຂງ** ໃຫ້ສາມາດບັນລຸມາດຕະຖານສາກົນ.

ສ້າງຄວາມເຂັ້ມແຂງວຽກງານການຕິດຕາມ, ກວດກາ **ການນຳໃຊ້ຢາຕ້ານເຊື້ອຢ່າງສົມເຫດສົມຜົນ**ຢູ່ຮ້ານຂາຍຢາ ແລະ ສະຖານທີ່ບໍລິການສາທາລະນະສຸກໃນແຕ່ລະຂັ້ນ;

ສົ່ງເສີມ ແລະ ລົງທຶນໃສ່ພື້ນຖານໂຄງລ່າງ **ການຄົ້ນຄ້ວາວິທະຍາສາດ, ພັດທະນາດ້ານການແພດການຢາພື້ນເມືອງ;**

ພັດທະນາ**ຫ້ອງວິໄຈຢູ່ ບາງແຂວງ** ໃຫ້ສາມາດ ວິໄຈຄຸນນະພາບອາຫານ ແລະ ຢາ ໄດ້ໃນຂັ້ນພື້ນຖານ.

# ວຽກຈຸດສຸມບູລິມະສິດໃນ 5 ປີ ຕໍ່ໜ້າ:

ແຜນງານ 5

- **ພັດທະນາບຸກຄະລະກອນການແພດ** ໃຫ້ມີຄຸນນະພາບ, ສ້າງໃຫ້ມີແພດຊ່ຽວຊານທີ່ຈຳເປັນຢູ່ໂຮງໝໍແຕ່ລະຂັ້ນເພື່ອຮັບປະກັນການບໍລິການທີ່ມີຄຸນນະພາບ ແລະ ທົ່ວເຖິງ;

  **ບັນຈຸ, ຊັບຊ້ອນ ພະນັກງານ** ເພື່ອຮັບປະກັນໃຫ້ມີພະນັກງານຕາມເງື່ອນໄຂຂອງການບໍລິການຢູ່ແຕ່ລະຂັ້ນ ໄປຄຽງຄູ່ກັບການສະ ໜອງນະໂຍບານທີ່ເໝາະສົມ;

- **ປະຕິຮູບສະຖາບັນການສຶກສາ-**ສາທາລະນະສຸກໃຫ້ມີມາດຕະຖານ ແລະ ຄຸນນະພາບສູງຂຶ້ນກວ່າເກົ່າ.

ແຜນງານ 6

ສ້າງຄວາມເຂັ້ມແຂງດ້ານວຽກງານ **ການສ້າງແຜນການ - ການເງິນ,** ການຄຸ້ມຄອງການເງິນສາທາລະນະສຸກ, ການຄຸ້ມຄອງຊັບສິນ ທັງຢູ່ສູນກາງ ແລະ ທ້ອງຖິ່ນ, ຮັບປະກັນການລົງທຶນໃນຂະແໜງສາທາລະນະສຸກໃຫ້ມີປະສິດຕິຜົນສູງ.

ສ້າງ**ກອງທຶນປະກັນສຸຂະພາບໃຫ້ມີຄວາມເຂັ້ມແຂງ**, ສາມາດປົກຄຸມໄດ້ທັງການກັນພະຍາດ, ການບໍລິການບົ່ງມະຕິ ແລະ ປິ່ນປົວພະຍາດ ໂດຍມີກົນໄກການເງິນທີ່ສອດຄ່ອງ ແລະ ມີຄວາມຍືນຍົງ

ແຜນງານ 7

**ຍົກລະດັບປະສິດທິພາບຂອງການຄຸ້ມຄອງບໍລິຫານວຽກງານ**, ນຳໃຊ້ Digital ໃນການຄຸ້ມຄອງບໍລິຫານ,

**ພົວພັນ-ປະສານງານ** ພາຍໃນຂະແໜງການທັງສູນກາງ & ທ້ອງຖິ່ນ, ຂະແໜງການອື່ນ ແລະ ຄູ່ຮ່ວມພັດທະນາ ໃຫ້ມີຄວາມກົມກຽວ ແລະ ໂລ່ງລ່ຽນ;

ພັດທະນາ**ຂໍ້ມູນຂ່າວສານສາທາລະນະສຸກ**ໃຫ້ມີຄວາມທັນສະໄໝ, ສາມາດສະໜອງຂໍ້ມູນທີ່ຖືກຕ້ອງ, ເຊື່ອຖືໄດ້ & ທັນເວລາ

ຖືສຳຄັນວຽກງານກວດກວດສອບ, ກວດກາ & ການນຳໃຊ້ບັນດາກົດໝາຍ ໃຫ້ໄດ້ຮັບຜົນດີ.

# ຄາດຄະເນງົບປະມານ 2026-2030

| | | Unit | 2025 | 2026 | 2027 | 2028 | 2029 | 2030 | 2026-2030 |
|---|---|---|---|---|---|---|---|---|---|
| Total GHE | ລວມລາຍຈ່າຍທັງໝົດຂອງລັດຖະບານທາງດ້ານສາທາລະນະສຸກ | Bill LAK | 3,922 | 4,428 | 5,034 | 5,428 | 5,843 | 6,289 | 27,022 |
| *Total GHE* | *ລວມລາຍຈ່າຍທັງໝົດຂອງລັດຖະບານທາງດ້ານສາທາລະນະສຸກ* | *Mill USD* | *136* | *154* | *175* | *189* | *203* | *219* | *940* |
| Total Domestic GHE | ລາຍຈ່າຍພາຍໃນຂອງລັດຖະບານທາງດ້ານສາທາລະນະສຸກ | Bill LAK | 2,667 | 3,100 | 3,625 | 4,017 | 4,440 | 4,905 | 20,087 |
| *Total Domestic GHE* | *ລາຍຈ່າຍພາຍໃນຂອງລັດຖະບານທາງດ້ານສາທາລະນະສຸກ* | *Mill USD* | *93* | *108* | *126* | *140* | *154* | *171* | *699* |
| Total ODA | ການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) | Bill LAK | 1,255 | 1,328 | 1,410 | 1,411 | 1,402 | 1,384 | 6,935 |
| *Total ODA* | *ການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA)* | *Mill USD* | *44* | *46* | *49* | *49* | *49* | *48* | *241* |
| GGHE in % GGE | ລາຍຈ່າຍດ້ານສາທາລະນະສຸກ ທຽບໃສ່ລາຍຈ່າຍທັງໝົດຂອງລັດຖະບານ | % | 6 | 6 | 6 | 6 | 6 | 6 | 6 |
| *Total GHE per capita* | *ລາຍຈ່າຍດ້ານສາທາລະນະສຸກຈາກແຫຼ່ງທຶນພາຍໃນຕໍ່ຫົວຄົນ* | *USD* | *18* | *20* | *22* | *23* | *25* | *27* | *23* |

# ຂໍຂອບໃຈ